**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງ ຄຳມ່ວນ
ຄະນະປະຈຳ

ເລກທີ 185 /ຄປຈ.ສພຂ
ຄຳມ່ວນ, ວັນທີ 20. ມິຖຸນາ. 2024

# ຄຳແນະນຳ

## ວ່າດ້ວຍການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງເຈົ້າແຂວງ ຄຳມ່ວນ ຂົງເຂດເສດຖະກິດ.

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ມະຕິ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ສະບັບປັບປຸງເລກທີ 145/ຄປຈ.ສພຂ, ລົງວັນທີ 20 ທັນວາ 2023;
- ອີງຕາມ ແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງຄຳມ່ວນ ສະບັບເລກທີ 170./ຄປຈ.ສພຂ, ລົງວັນທີ 28 ພຶດສະພາ 2024 ຂໍ້ 2.2 ວຽກງານນິຕິກຳ.

ເພື່ອເຮັດໃຫ້ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງເຂົ້າແຂວງຄຳມ່ວນ ໄດ້ດຳເນີນໄປຢ່າງຖືກຕ້ອງ, ພາວະວິໄສ, ມີປະສິດທິພາບ ແລະ ປະສິດທິຜົນ.

**ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ອອກຄຳແນະນຳ:**

### I. ຄວາມສຳຄັນ ແລະ ຄວາມຈຳເປັນ ຂອງການປະເມີນ

ນັບແຕ່ໄດ້ສ້າງຕັ້ງ ສະພາປະຊາຊົນແຂວງຄຳມ່ວນ ໃນຊຸດທີ I ແລະ ຊຸດທີ່ II ເປັນຕົ້ນມາ ໄດ້ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ຫຼາຍສະບັບ ແລະ ເຈົ້າແຂວງຄຳມ່ວນ ໄດ້ປະກາດໃຊ້ ຂໍ້ຕົກລົງຂອງເຈົ້າແຂວງ ໃນຂົງເຂດເສດຖະກິດເປັນຈຳນວນຫຼາຍສະບັບ ຊຶ່ງໄດ້ກາຍເປັນເຄື່ອງມືທີ່ສຳຄັນຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ແກ້ໄຂບັນຫາຂໍ້ຂັດແຍ່ງໃນສັງຄົມ, ເປັນບ່ອນອີງ ແລະ ເຄື່ອງມືໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ບຸກຄົນ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແນໃສ່ພັດທະນາເສດຖະກິດ-ສັງຄົມ ຢູ່ໃນແຂວງຄຳມ່ວນ; ແຕ່ພ້ອມດຽວກັນນັ້ນ ການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງເຈົ້າແຂວງ ໃນຂົງເຂດເສດຖະກິດ ຍັງມີຫຼາຍບັນຫາ ທີ່ເລັ່ງທວງໃຫ້ພວກເຮົາ ຕ້ອງມີການຕິດຕາມ ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ແລະ ປັບປຸງນິຕິກຳທີ່ໄດ້ສະພາປະຊາຊົນຂັ້ນແຂວງໄດ້ຮັບຮອງໃຫ້ດີຂຶ້ນກວ່າເກົ່າ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດທະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ຂໍ້ຕົກລົງ ຂອງເຈົ້າແຂວງ ມີຜົນສັກສິດ ແລະ ເຂັ້ມງວດຫຼາຍຂຶ້ນ. ສະນັ້ນ, ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຈຶ່ງໄດ້ຕົກລົງໃຫ້ ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງເຈົ້າແຂວງ ໃນຂົງເຂດເສດຖະກິດ ເພື່ອນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາ



Scanned with CamScanner

ປະຊາຊົນແຂວງຄໍາມ່ວນ ຊຸດທີ II ໂດຍເນັ້ນໃສ່ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງນໍາໃຊ້ ທີ່ດິນກະສິກໍາ ຢູ່ແຂວງຄໍາມ່ວນ ສະບັບເລກທີ 333 /ຈຂ.ຄມ, ລົງວັນທີ 03 ມີນາ 2020.

ເພື່ອຮັບປະກັນທາງດ້ານເນື້ອໃນຂອງການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ຊຶ່ງເຂດເສດຖະກິດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນກັບເວລາ, ຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ ຈຶ່ງໄດ້ອອກຄໍາແນະນໍາ ສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນທົ່ວແຂວງຄໍາມ່ວນ.

## II. ຈຸດປະສົງ ແລະ ຄາດໝາຍ

1) ເພື່ອກວດກາ ແລະ ຊຸກຍູ້ ຂະແໜງການທີ່ກ່ຽວຂ້ອງ ຂອງອົງການປົກຄອງແຂວງ (ພະແນກກະສິກໍາ ແລະ ປ່າໄມ້) ປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າ ແຂວງ ໃຫ້ສໍາເລັດຕາມແຜນການ, ມີປະສິດທິພາບ ແລະ ປະສິດທິຜົນ;

2) ເພື່ອເຮັດໃຫ້ບົດສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ທີ່ຈະນໍາລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຄາມ່ວນ ຊຸດທີ II ມີເນື້ອໃນ ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ແທດເໝາະກັບຕົວຈິງ;

3) ເພື່ອຖອດຖອນບົດຮຽນໃຫ້ແກ່ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ຊຶ່ງເຂດຕ່າງໆ ໃນຕໍ່ໜ້າ.

## III. ເນື້ອໃນ

**1) ຂໍ້ຕົກລົງຂອງເຈົ້າແຂວງ ຄໍາມ່ວນ ທີ່ຈະດໍາເນີນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຄັ້ງນີ້ ມີ ຈໍານວນ 01 ສະບັບ ຄື:**

- ຂໍ້ຕົກລົງຂອງເຈົ້າແຂວງຄໍາມ່ວນ ວ່າດ້ວຍ ການຄຸ້ມຄອງນໍາໃຊ້ ທີ່ດິນກະສິກໍາ ຢູ່ແຂວງຄໍາມ່ວນ ສະບັບເລກທີ 333 /ຈຂ.ຄມ, ລົງວັນທີ 03 ມີນາ 2020.

**2) ເນື້ອໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກເຈົ້າແຂວງ ມີ ດັ່ງນີ້:**

**2.1. ເນື້ອໃນລວມ**

**2.1.1. ສັງລວມຫຍໍ້ສະພາບຄວາມເປັນມາ ຂອງຂໍ້ຕົກລົງເຈົ້າແຂວງ**

- ສະພາບຄວາມເປັນມາ ຂອງຂໍ້ຕົກລົງ ໃຫ້ສະແດງອອກໃຫ້ເຫັນເຖິງຄວາມສໍາຄັນ ແລະ ຄວາມຈໍາເປັນ ຂອງການສ້າງຂໍ້ຕົກລົງ, ຂະບວນການກໍາຄືບາດກ້າວຂັ້ນຕອນຂອງການສ້າງ, ກົນໄກການຈັດຕັ້ງປະຕິບັດ ຂໍ້ຕົກລົງ ພາຍຫຼັງການຮັບຮອງຈາກກອງປະຊຸມສະພາປະຊົນແຂວງ ແລະ ໝາກຜົນຈາກການຈັດຕັ້ງປະຕິບັດຂໍ້ຕົກລົງ.

**2.1.2. ຕີລາຄາຜົນ ຂອງການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບຂໍ້ຕົກລົງຂອງເຈົ້າແຂວງ:**

1) ການໂຄສະນາ ເຜີຍແຜ່ ດ້ວຍຮູບການ, ວິທີການ ແນວໃດ?

2) ໄດ້ຈັດຕັ້ງໂຄສະນາ ເຜີຍແຜ່ ອັນລວມໄດ້ຈັກຄັ້ງ, ຈັກຈຸດ, ມີຜູ້ເຂົ້າຮ່ວມຈັກຄົນ? ສໍາລັບອັນສະເພາະແຍກໃຫ້ເຫັນຄື:

- ✓ ການໂຄສະນາເຜີຍແຜ່ຂໍ້ຕົກລົງເຈົ້າແຂວງ ທົ່ວເຖິງຖັນແຖວພະນັກງານ ຂອງຂະແໜງກະສິກໍາປ່າໄມ້ແຕ່ລະຂັ້ນ ຄືແນວໃດ? ສາມາດເຜີຍແຜ່ໄດ້ຈັກສ່ວນຮ້ອຍ?
- ✓ ການໂຄສະນາເຜີຍແຜ່ຂໍ້ຕົກລົງເຈົ້າແຂວງ ທົ່ວເຖິງ ພະນັກງານ, ທະຫານ-ຕໍາຫຼວດ ພາຍໃນແຂວງ ຄືແນວໃດ? ສາມາດເຜີຍແຜ່ໄດ້ຈັກສ່ວນຮ້ອຍ?
- ✓ ການໂຄສະນາເຜີຍແຜ່ກົດໝາຍ ທົ່ວເຖິງສັງຄົມ ແລະ ປະຊາຊົນ ຄືແນວໃດ? ສາມາດເຜີຍແຜ່ໄດ້ຈັກສ່ວນຮ້ອຍ?

3) ສະພາບຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ຂໍ້ຕົກລົງສະບັບດັ່ງກ່າວ ຂອງພະແນການ, ອົງການທຽບເທົ່າພະແນກຂັ້ນແຂວງ, ເມືອງ, ເທດສະບານ, ບ້ານ ແລະ ປະຊາຊົນມີໜ້ອຍຫຼາຍພຽງໃດ?



Scanned with CamScanner

4) ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ຄືແນວໃດ?

**2.1.3. ການສ້າງ ຫຼື ປັບປຸງກົນໄກການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ**

- ພາຍຫຼັງທີ່ຂໍ້ຕົກລົງປະກາດໃຊ້ແລ້ວ ອົງການລັດທີ່ກ່ຽວຂ້ອງ ໄດ້ມີຂັ້ນຕອນ, ວິທີການ ແລະ ມີແບບແຜນການຈັດຕັ້ງປະຕິບັດຄືແນວໃດ?

**2.1.4 . ການຝຶກອົບຮົມ, ຍົກລະດັບ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານລັດຖະກອນ ທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ:**

1) ໄດ້ຈັດຕັ້ງປະຕິບັດດ້ວຍຮູບການ, ວິທີການ ແນວໃດ?

2) ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ຄືແນວໃດ?

**2.1.5. ການກວດກາຂໍ້ຕົກລົງຂອງເຈົ້າແຂວງ ທີ່ຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້**

1) ຂໍ້ຕົກລົງເຈົ້າແຂວງ ຂັດກັບຂໍ້ຕົກລົງສະບັບອື່ນມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້;

2) ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ມີການລະເມີດຫຼາຍກ່ວາໝູ່ແມ່ນມາດຕາໃດ ກ່ຽວກັບບັນຫາໃດ ແລະ ຈະມີວິທີການແກ້ໄຂ ຄືແນວໃດ?;

3) ມາດຕະການທີ່ສາມາດເຮັດໃຫ້ຂໍ້ຕົກລົງຂອງເຈົ້າແຂວງ ບັນລຸຕາມຈຸດປະສົງມີຫຍັງແດ່ ແລະ ເໝາະສົມແລ້ວບໍ່?;

4) ຂໍ້ຕົກລົງແນະນຳຂອງເຈົ້າແຂວງ, ມີຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ ຫຼື ບໍ່, ຖ້າມີ ມີຫຼາຍໜ້ອຍພຽງໃດ?.

5) ຂໍ້ຕົກລົງຂອງເຈົ້າແຂວງ ມີຄວາມສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດການເປັນຢູ່ຂອງປະຊາຊົນພາຍໃນແຂວງຄືແນວໃດ?

6) ຜົນກະທົບທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ມີອັນໃດແດ່?

8) ອຸປະສັກໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ມີຄືແນວໃດ?

8) ບົດຮຽນທີ່ຖອດຖອນໄດ້ ມີຄືແນວໃດ?

**2.1.6. ການສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ ຈັດການ ເພື່ອອຳນວຍຄວາມສະດວກໃນການສະໜອງການບໍລິການໃຫ້ແກ່ປະຊາຊົນ:**

1) ໄດ້ສະໜອງຂໍ້ມູນຂ່າວສານທີ່ຕິດພັນ ກັບຂໍ້ຕົກລົງຂອງເຈົ້າແຂວງ ໃຫ້ແກ່ປະຊາຊົນບັນດາເຜົ່າຄືແນວໃດ?

2) ການບໍລິການຈັດການ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານ ທີ່ຕິດພັນກັບຂໍ້ຕົກລົງຂອງເຈົ້າແຂວງ ມີຄືແນວໃດ? ແລະ ໄດ້ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນລາວບັນດາເຜົ່າ ຄືແນວໃດ?

**2.1.7. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງມີຫຍັງແດ່?;**

**2.1.8. ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ມີຜົນສຳເລັດຕົວຈິງ, ມີດ້ານດີ, ດ້ານອ່ອນ ຄືແນວໃດ? ສາເຫດຕົ້ນຕໍ ທີ່ພາໃຫ້ ມີດ້ານດີ, ດ້ານອ່ອນ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງແກ້ໄຂໃນຕໍ່ໜ້າ ມີຫຍັງແດ່?**

**2.2. ເນື້ອໃນສະເພາະ**

ການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງເຈົ້າແຂວງ ສະບັບນີ້ ໃຫ້ເລັ່ງໃສ່ລົງເລິກປະເມີນ 10 ມາດຕາຄື: ມາດຕາ 1, 2, 7, 8, 11, 12, 13, 14, 19, 21 ແລະ ມາດຕາອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ;

**III. ທິດທາງການປະເມີນ**

ການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງດັ່ງກ່າວ ໃຫ້ປະຕິບັດຕາມທິດທາງ ດັ່ງນີ້:



Scanned with CamScanner

CamScanner

1) ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເປັນເຈົ້າການຈັດຕັ້ງປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ຕາມມາດຕາ 124 ແລະ 125 ກົດໝາຍວ່າດ້ວຍ ການສ້າງນິຕິກຳສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021, ສ່ວນ ສະພາປະຊາຊົນຂັ້ນແຂວງ ແມ່ນປະຕິບັດພາລະບົດບາດຕິດຕາມ ກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ດັ່ງກ່າວ;

2) ຄະນະຮັບຜິດຊອບ ຊີ້ນຳການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ຂອງສະພາປະຊາຊົນຂັ້ນແຂວງ ຕ້ອງເປັນເຈົ້າການປະສານສົມທົບກັບ ອົງການປົກຄອງແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນການປະເມີນ. ພ້ອມກັນນັ້ນ, ກໍໃຫ້ຄົ້ນຄວ້າ, ເກັບກຳຂໍ້ມູນຕ່າງໆ ທີ່ພົວພັນກັບການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງດັ່ງກ່າວ ໃນບັນດາອົງການ, ຂະແໜງການ, ຢູ່ໃນແຕ່ລະຂັ້ນ;

3) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນເຈົ້າການ ເຂົ້າຮ່ວມ, ຕິດຕາມ ກວດກາ ແລະ ຊຸກຍູ້ການດຳເນີນການປະເມີນ ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ.

4) ຄະນະຮັບຜິດຊອບ ຊີ້ນຳການດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ໃຫ້ເພີ່ມທະວີການປະສານສົມທົບກັບ ອົງການປົກຄອງແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ໃນການຈັດຕັ້ງປະຕິບັດວຽກງານການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງເຈົ້າແຂວງ ໃຫ້ກົມກຽວກັນ, ແທດເຖິງຕົວຈິງ, ມີປະສິດທິພາບ ແລະ ປະສິດທິຜົນ.

## IV. ວິທີການຕິດຕາມກວດກາ

ວິທີການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ປະຕິບັດຕາມຮູບການດັ່ງນີ້:

### 4.1. ຮູບການຈັດກອງປະຊຸມ ແບບເຊິ່ງໜ້າ

ການຈັດກອງປະຊຸມແບບເຊິ່ງໜ້າ ຈະໄດ້ຈັດຂຶ້ນຢູ່ 2 ລະດັບຄື: ລະດັບຂັ້ນເມືອງ ແລະ ລະດັບຂັ້ນແຂວງ ເຊິ່ງມີລາຍລະອຽດດັ່ງນີ້:

**(1) ກອງປະຊຸມເຊິ່ງໜ້າ ລະດັບຂັ້ນເມືອງ**

- ກອງປະຊຸມຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງຢູ່ຂັ້ນເມືອງ ໃຫ້ຄະນະຮັບຜິດຊອບ ຄັດເລືອກເອົາເມືອງໃດໜຶ່ງ ພາຍໃນແຂວງຄຳມ່ວນ ຊຶ່ງເປັນເມືອງທີ່ມີການຫັນປ່ຽນດິນກະສິກຳເປັນດິນປະເພດອື່ນຢ່າງຫຼວງຫຼາຍ ແລະ ມີທ່າອ່ຽງມີຜົນກະທົບຕໍ່ທີ່ດິນກະສິກຳໃນອະນາຄົດ; ນອກຈາກເມືອງທີ່ຄະນະຮັບຜິດຊອບໄດ້ຄັດເລືອກແລ້ວ, ເມືອງອື່ນໆ ກໍໃຫ້ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງ ເປັນຜູ້ຈັດຕັ້ງປະຕິບັດຕາມສະພາບເງື່ອນໄຂຕົວຈິງ;

- ຜູ້ເຂົ້າຮ່ວມກອງປະຊຸມຢູ່ຂັ້ນເມືອງ ປະກອບມີເປົ້າໝາຍຜູ້ເຂົ້າຮ່ວມທີ່ກ່ຽວຂ້ອງຄື: ຄະນະຮັບຜິດຊອບຕິດຕາມກວດກາ, ຄະນະ ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ, ເຈົ້າເມືອງ ຫຼື ຮອງເຈົ້າເມືອງ ຜູ້ຮັບຜິດຊອບຊີ້ນຳຂົງເຂດເສດຖະກິດ, ຫ້ອງວ່າການເມືອງ, ຫ້ອງການກະສິກຳເມືອງ, ຫ້ອງການຍຸຕິທຳ, ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການພະລັງງານ ແລະ ບໍ່ແຮ່, ຫ້ອງການແຜນການ ແລະ ການລົງທຶນ, ຫ້ອງການໂຍທາທິການ ແລະ ຂົນສົ່ງ, ຫ້ອງການການເງິນ, ຫ້ອງການອຸດສະຫະກຳ ແລະ ການຄ້າ, ຫ້ອງການເຕັກໂນໂລຊີ ແລະ ການສື່ສານ, ອົງການກວດກາລັດເມືອງ, ຄະນະໂຄສະນາອົບຮົມເມືອງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ;

**(2) ກອງປະຊຸມເຊິ່ງໜ້າ ລະດັບຂັ້ນແຂວງ**

ຜູ້ເຂົ້າຮ່ວມກອງປະຊຸມລະດັບຂັ້ນແຂວງ ປະກອບມີເປົ້າໝາຍຜູ້ເຂົ້າຮ່ວມທີ່ກ່ຽວຂ້ອງຄື: ຄະນະຮັບຜິດຊອບຕິດຕາມກວດກາ, ເຈົ້າແຂວງ ຫຼື ຮອງເຈົ້າແຂວງ, ຫ້ອງວ່າການແຂວງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກຍຸຕິທຳ , ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກແຜນການ



Scanned with CamScanner

ແລະ ການລົງທຶນ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການເງິນ, ພະແນກອຸດສະຫະກຳ ແລະ ການຄ້າ, ພະແນກເຕັກໂນໂລຊີ ແລະ ການສື່ສານ, ອົງການກວດກາລັດແຂວງ ແລະ ແນວລາວສ້າງຊາດແຂວງ.

**(3) ວາລະການດຳເນີນກອງປະຊຸມ**

ກອງປະຊຸມເຊີ່ງໜ້າ ທັງ 2 ລະດັບ ຈະໄດ້ດຳເນີນດ້ວຍວິທີການດັ່ງນີ້:

1. ປະທານກ່າວເປີດກອງປະຊຸມ;
2. ອົງການປົກຄອງແຂວງ/ເມືອງ (ຂະແໜງການທີ່ຮັບຜິດຊອບສ້າງຂໍ້ຕົກລົງ) ລາຍງານຜົນ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ຕາມຄວາມຮັບຜິດຊອບ ຂອງຕົນຕໍ່ກອງປະຊຸມ;
3. ປະທານກອງປະຊຸມເຈາະຈີ້ມ;
4. ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ ແລະ ປະກອບຄຳເຫັນ;
5. ອົງການປົກຄອງແຂວງ/ເມືອງ (ຂະແໜງການທີ່ຮັບຜິດຊອບສ້າງຂໍ້ຕົກລົງ) ຊີ້ແຈງ ແລະ ອະທິບາຍ;
6. ປະທານກອງປະຊຸມສັງລວມຄຳເຫັນ, ໃຫ້ທິດຊີ້ນຳ ແລະ ກ່າວປິດກອງປະຊຸມ.

**4.2. ຮູບການເກັບກຳຂໍ້ມູນ**

ຮູບການເກັບກຳຂໍ້ມູນ ແມ່ນຈັດຕັ້ງປະຕິບັດດ້ວຍວິທີການສອບຖາມເປົ້າໝາຍ ໂດຍຜ່ານສື່ອອນລາຍ, ສົ່ງໃຫ້ບັນດາພະແນກການ/ຫ້ອງການ, ອົງການທຽບເທົ່າຂັ້ນແຂວງ-ເມືອງ, ປະຊາຊົນທົ່ວໄປໃນທົ່ວແຂວງ ເຊັ່ນ: ສ້າງຮ່າງແບບສອບຖາມ ຫຼື ຄຳຖາມເຈາະຈີ້ມ; ແຈກຢາຍແບບສອບຖາມໃຫ້ເປົ້າໝາຍ ແລະ ການສັງລວມຂໍ້ມູນ ດັ່ງນີ້ເປັນຕົ້ນ.

**V. ການຈັດຕັ້ງປະຕິບັດ**

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງເຈົ້າແຂວງ ໃຫ້ດຳເນີນຕາມບາດກ້າວ-ຂັ້ນຕອນດັ່ງນີ້:

**5.1. ບາດກ້າວທີໜຶ່ງ: ກະກຽມຄວາມພ້ອມວຽກງານຮອບດ້ານ**

1) ກະກຽມເອກະສານຕ່າງໆເຊັ່ນ: ແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ມະຕິແຕ່ງຕັ້ງຄະນະຮັບຜິດຊອບ, ຄຳແນະນຳ, ແຈ້ງການ, ໜັງສືສະເໜີ, ຄຳຖາມເຈາະຈີ້ມ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;

2) ຈັດກອງປະຊຸມປຶກສາຫາລື ເພື່ອຄວາມເປັນເອກະພາບກັບຄະນະກຳມະການທີ່ກ່ຽວຂ້ອງຂອງສະພາປະຊາຊົນຂັ້ນແຂວງ, ອົງການທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ຫ້ອງວ່າການແຂວງ, ພະແນກຍຸຕິທຳ, ອົງການລັດອື່ນທີ່ກ່ຽວຂ້ອງ ແລະ ພາກສ່ວນທຸລະກິດ;

3) ນຳສົ່ງ ຄຳແນະນຳ, ແຜນການ, ຄຳຖາມເຈາະຈີ້ມ, ແຈ້ງການ ແລະ ເອກະສານຕ່າງໆ ໃຫ້ອົງການປົກຄອງແຂວງ , ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ;

4) ພົວພັນ, ປະສານສົມທົບກັບ ອົງການທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ຂົງເຂດເສດຖະກິດ ໃຫ້ມີຄວາມກົມກຽວກັນແຕ່ຫົວທີ;

**5.2. ບາດກ້າວທີສອງ: ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ລະດັບຂັ້ນເມືອງ ແລະ ຂັ້ນແຂວງ**

ການຈັດຕັ້ງປະຕິບັດໃນບາດກ້າວນີ້ ໃຫ້ຈັດຕັ້ງປະຕິບັດຕາມຮູບການຕິດຕາມກວດກາ ເຊິ່ງໄດ້ກຳນົດໄວ້ໃນໃຈແມັງ IV ຂໍ້ 4.1, 4.2.

**5.3. ບາດກ້າວທີສາມ: ສະຫຼຸບຕີລາຄາ ແລະ ລາຍງານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຂໍທິດຊີ້ນຳ.**



Scanned with CamScanner

1) ຄະນະຮັບຜິດຊອບຕິດຕາມກວດກາ ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນ ກ່ຽວກັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ເພື່ອປັ້ງປັນຜົນການຕິດຕາມກວດກາ;

2) ກະກຽມບົດລາຍງານຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງເຈົ້າແຂວງຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3) ກະກຽມເນື້ອໃນບົດປະກອບຄຳເຫັນ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ;

4) ກະກຽມຮ່າງມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ.

**4. ບາດກ້າວທີ ສີ່: ລາຍງານຕໍ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ**

1) ສະຫຼຸບສັງລວມ ແລະ ລາຍງານຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2) ນຳເອົາຜົນການຕິດຕາມກວດກາ ເຂົ້າຄົ້ນຄວ້າ ພິຈາລະນາ ຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ສະພາປະຊາຊົນຂັ້ນແຂວງ;

3) ອອກມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ.

## VI. ມາດຕະການຈັດຕັ້ງປະຕິບັດ:

1) ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ນຳພາ-ຊີ້ນຳ ຄະນະຮັບຜິດຊອບຕິດຕາມກວດກາ ເປັນເຈົ້າການຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້;

2) ບັນດາຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດຄຳແນະນຳສະບັບນີ້;

3) ອົງການປົກຄອງແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການປະສານສົມທົບຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຕາມພາລະບົດບາດຂອງຕົນ ໃຫ້ບັນລຸຜົນສຳເລັດ ຢ່າງມີປະສິດທິພາບ ປະສິດທິຜົນ;

4) ເພີ່ມທະວີການປະສານສົມທົບ ລະຫວ່າງ ຄະນະຮັບຜິດຊອບຕິດຕາມກວດກາ ກັບ ອົງການປົກຄອງແຂວງ ໂດຍສະເພາະແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້.

## VII. ຜົນສັກສິດ:

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ**

**ປະທານ**

ບຸນມີ ພິມມະສອນ

**ບ່ອນນຳສົ່ງ:**

- ຄະນະປະຈຳ ສພຂ ທ່ານລະ 1 ສະບັບ;
- ອົງການປົກຄອງແຂວງ 1 ສະບັບ;
- ຄະນະກຳມະການ ສພຂ ບ່ອນລະ 1 ສະບັບ;
- ຄະນະເລຂາທິການ ສພຂ 1 ສະບັບ;
- ພະແນກກະສິກຳແຂວງ 1 ສະບັບ;
- ສຳເນົາ 1 ສະບັບ.



Scanned with CamScanner